ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 06076 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 10 OCT 2018

# ແຈ້ງການແນະນຳ

ເຖິງ: ຫົວໜ້າ ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີ ປະຈຳແຂວງ, ນະຄອນຫຼວງ, ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ.

ເລື່ອງ: ການຄຸ້ມຄອງ ແລະ ການປະກອບເອກະສານການນຳເຂົ້ານ້ຳມັນເຊື້ອໄຟຍົກເວັ້ນປະເພດຕ່າງໆ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ (ສະບັບປັບປຸງບາງມາດຕາ) ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ຂໍ້ຕົກລົງ ກະຊວງການເງິນ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.
- ອີງຕາມ ຄຳແນະນຳ ກົມພາສີ ສະບັບເລກທີ 02518/ກພສ, ລົງວັນທີ 21 ພຶດສະພາ 2018 ວ່າດ້ວຍການຄຸ້ມຄອງການນຳເຂົ້າວັດຖຸອຸປະກອນ, ກົນຈັກ, ພາຫະນະ, ນ້ຳມັນເຊື້ອໄຟ ແລະ ອື່ນໆ ທີ່ນຳເຂົ້າມລະບອບຍົກເວັ້ນ, ງົດເກັບພາສີ ຫຼື ເສຍພາສີຫຼຸດຜ່ອນ.
- ອີງຕາມ ແຈ້ງການແນະນຳ ສະບັບເລກທີ 0302/ກພສ, ລົງວັນທີ 17/01/2017 ວ່າດ້ວຍການນຳເຂົ້ານ້ຳມັນກາດຍົນ (JET A1) ຮັບໃຊ້ສາຍການບິນຕ່າງປະເທດຢູ່ບັນດາດ່ານສະໜາມບິນສາກົນ ໃນທົ່ວປະເທດ.

ເພື່ອຮັບປະກັນການຕິດຕາມ, ກວດກາ, ການແບ່ງຂັ້ນຄຸ້ມຄອງ ແລະ ການນຳໃຊ້ລະບົບຄຸ້ມຄອງຫັກລົບແຜນ ໃຫ້ສາມາດອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດຕໍ່ການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟຍົກເວັ້ນປະເພດຕ່າງໆ ແລະ ດຳເນີນການນຳເຂົ້າຕາມຂັ້ນຕອນທາງພາສີ, ພາຍຫຼັງອີງການລັດທີ່ມີສິດໃນການຕົກລົງ ອະນຸມັດແຜນນຳເຂົ້າປະຈຳປີ, ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍວ່າດ້ວຍພາສີ ແລະ ລະບຽບການກຳນົດ.

## ກົມພາສີ ອອກແຈ້ງການແນະນຳ ດັ່ງນີ້:

1. ມອບໃຫ້ຫົວໜ້າພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ, ນະຄອນຫຼວງ ຊີ້ນຳບັນດາດ່ານພາສີສາກົນ ຈັດຕັ້ງປະຕິບັດການນຳໃຊ້ລະບົບຄຸ້ມຄອງຫັກລົບແຜນ, ການປະກອບເອກະສານການນຳເຂົ້ານ້ຳມັນເຊື້ອໄຟຍົກເວັ້ນປະເພດຕ່າງໆ, ກວດກາຊະນິດ, ຈຳນວນ, ບໍລິມາດ, ເລກລະຫັດສິນຄ້າ ແລະ ເຕັກນິກວິຊາການພາສີອື່ນໆ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.
2. ມອບໃຫ້ຫົວໜ້າກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ ຄຸ້ມຄອງ, ກວດກາ, ຕິດຕາມ ລະບົບສາງເກັບມ້ຽນນ້ຳມັນ, ລະບົບການບັນທຶກນຳເຂົ້າ-ຈ່າຍອອກ ແລະ ລະບົບບັນຊີຕິດຕາມ ໃຫ້ສອດຄ່ອງຕາມລະບຽບກົດໝາຍ.

3. ການຄຸ້ມຄອງການປະກອບເອກະສານນຳເຂົ້ານ້ຳມັນເຊື້ອໄຟຍົກເວັ້ນປະເພດຕ່າງໆ, ພາຍຫຼັງທີ່ມີແຜນນຳເຂົ້າປະຈຳປີ ແລະ ມີອະນຸຍາດໃຫ້ນຳເຂົ້າເປັນງວດ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ທີ່ນຳສະເໜີຕໍ່ ກົມພາສີ ເພື່ອມອບໃຫ້ (ພະແນກ ຄຸ້ມຄອງການຍົກເວັ້ນ ແລະ ຈັດເກັບພາສີ) ກວດກາຄວາມຖືກຕ້ອງ, ປ້ອນຂໍ້ມູນພ້ອມອອກໃບຢັ້ງຢືນການບັນທຶກຂໍ້ມູນລົງໃນລະບົບຫັກລົບແຜນ, ອະນຸມັດເປັນງວດຕາມຈຳນວນ ແລະ ບໍລິມາດ ໃສ່ໃບຕິດຕາມການຍົກເວັ້ນພາສີ-ອາກອນຂາເຂົ້າ ແລະ ອອກສະໂນດນຳສົ່ງໃຫ້ດ່ານບ່ອນນຳເຂົ້າຈັດຕັ້ງປະຕິບັດ.
   - ສຳລັບນ້ຳມັນເຊື້ອໄຟຍົກເວັ້ນປະເພດຕ່າງໆ ທີ່ມີອະນຸຍາດໃຫ້ນຳເຂົ້າ ແລະ ກົມພາສີໄດ້ອອກໜັງສືທາງລັດຖະການມອບໃຫ້ດ່ານປະຕິບັດຜ່ານມາ ແມ່ນໃຫ້ສະຫຼຸບປິດບັນຊີການນຳເຂົ້າ ແລະ ການຄ້ຳປະກັນ (IM8) ຢ່າງຂາດຕົວ, ເລີ່ມແຕ່ວັນທີ 15 ຕຸລາ 2018 ເປັນຕົ້ນໄປ, ມອບໃຫ້ດ່ານເປັນຜູ້ຄຸ້ມຄອງກວດກາການນຳເຂົ້າ, ປະກອບໃບແຈ້ງພາສີເປັນລາຍລະອຽດ (IM4) ແລະ ອອກເອກະສານກຳກັບການເຄື່ອນຍ້າຍ ຕົ້ນທາງ-ປາຍທາງ ເພື່ອຄຸ້ມຄອງການນຳໃຊ້ສິດໃຫ້ຖືກຕ້ອງຕາມເປົ້າໝາຍ.
4. ການນຳເຂົ້ານ້ຳມັນເຊື້ອໄຟຍົກເວັ້ນ ຂອງບັນດາ ໂຄງການຕ່າງໆ, ສະຖານທູດ, ການນຳເຂົ້າໃນລະບອບຈັດເກັບຊົ່ວຄາວປະເພດນ້ຳມັນກາດຍົນ (JET A1) ແລະ ການໃຫ້ນະໂຍບາຍນ້ຳມັນເຊື້ອໄຟຍົກເວັ້ນອື່ນໆ ຂອງລັດຖະບານ ຕ້ອງປະກອບເອກະສານຄື:
   4.1 ການນຳເຂົ້ານ້ຳມັນເຊື້ອໄຟຍົກເວັ້ນ ໃຫ້ແກ່ສະຖານທູດ:
      - ສະໂນດນຳສົ່ງຂອງ ກະຊວງການຕ່າງປະເທດ.
      - ໃບອະນຸຍາດນຳເຂົ້າ ຂອງກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.
      - ໃບສະເໜີຂອງບໍລິສັດ ນ້ຳມັນເຊື້ອໄຟ.
      - ໃບມອບສິດຂອງຫ້ອງການສະຖານທູດ.
      - ສັນຍາ ລະຫວ່າງ ຫ້ອງການສະຖານທູດ ແລະ ບໍລິສັດນ້ຳມັນເຊື້ອໄຟ.
      - ຢັ້ງຢືນ ແລະ ສະຫຼຸບການມອບ-ຮັບນ້ຳມັນເຊື້ອໄຟຕາມສັນຍາ.
      - ໃບທະບຽນວິສາຫະກິດຂອງບໍລິສັດນ້ຳມັນເຊື້ອໄຟ.
      - ໃບຢັ້ງຢືນການມອບພັນທະປະຈຳປີ.
   4.2 ການນຳເຂົ້ານ້ຳມັນເຊື້ອໄຟຍົກເວັ້ນ ຂອງໂຄງການສຳປະທານ (CA):
      - ຂໍ້ຕົກລົງ ຂອງກະຊວງແຜນການ ແລະ ການລົງທຶນ (Master List).
      - ໃບອະນຸຍາດນຳເຂົ້າ ຂອງກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.
      - ໃບສະເໜີຂອງບໍລິສັດ ນ້ຳມັນເຊື້ອໄຟ.
      - ໃບມອບສິດຂອງໂຄງການ ຫຼື ບໍລິສັດ.
      - ສັນຍາ ລະຫວ່າງ ໂຄງການ/ບໍລິສັດ ແລະ ບໍລິສັດນ້ຳມັນເຊື້ອໄຟ.
      - ຢັ້ງຢືນ ແລະ ສະຫຼຸບການມອບ-ຮັບນ້ຳມັນເຊື້ອໄຟຕາມສັນຍາ.
      - ໃບທະບຽນວິສາຫະກິດ.
      - ໃບຢັ້ງຢືນການມອບພັນທະປະຈຳປີ.
   4.3 ການນຳເຂົ້ານ້ຳມັນເຊື້ອໄຟຍົກເວັ້ນ ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ (ODA):
      - ຂໍ້ຕົກລົງ ຂອງກະຊວງການເງິນ (Master List).
      - ໃບອະນຸຍາດນຳເຂົ້າ ຂອງກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ
      - ໃບສະເໜີຂອງບໍລິສັດ ນ້ຳມັນເຊື້ອໄຟ.
      - ໃບມອບສິດຂອງໂຄງການ ຫຼື ບໍລິສັດ.
      - ສັນຍາ ລະຫວ່າງ ໂຄງການ ຫຼື ບໍລິສັດ ແລະ ບໍລິສັດນ້ຳມັນເຊື້ອໄຟ.

- ຢັ້ງຢືນ ແລະ ສະຫຼຸບການມອບ-ຮັບນໍ້າມັນເຊື້ອໄຟຕາມສັນຍາ.
- ໃບທະບຽນວິສາຫະກິດ.
- ໃບຢັ້ງຢືນການມອບພັນທະປະຈໍາປີ.

4.4 ການນໍາເຂົ້າໃນລະບອບງົດເກັບຊົ່ວຄາວປະເພດນໍ້າມັນກາດບິນ (JET A1) ຮັບໃຊ້ສາຍການບິນຕ່າງປະເທດ:

- ຂໍ້ຕົກລົງ ຂອງກະຊວງການເງິນ (Master List).
- ໃບອະນຸຍາດນໍາເຂົ້າ ຂອງກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ.
- ໃບສະເໜີຂອງບໍລິສັດ ນໍ້າມັນເຊື້ອໄຟ.
- ໃບມອບສິດຂອງໂຄງການ ຫຼື ບໍລິສັດ.
- ສັນຍາ ລະຫວ່າງ ໂຄງການ/ບໍລິສັດ ແລະ ບໍລິສັດນໍ້າມັນເຊື້ອໄຟ.
- ຢັ້ງຢືນ ແລະ ສະຫຼຸບການມອບ-ຮັບນໍ້າມັນເຊື້ອໄຟຕາມສັນຍາ.
- ໃບທະບຽນວິສາຫະກິດ.
- ໃບຢັ້ງຢືນການມອບພັນທະປະຈໍາປີ.

4.5 ກໍລະນີການໃຫ້ນະໂຍບາຍນໍ້າມັນເຊື້ອໄຟຍົກເວັ້ນອື່ນໆ ຂອງລັດຖະບານ:

ໃນກໍລະນີມີການຂໍນໍາເຂົ້ານໍ້າມັນເຊື້ອໄຟຍົກເວັ້ນເປັນກໍລະນີສະເພາະທີ່ລັດຖະບານເປັນຜູ້ຕົກລົງອະນຸມັດໃຫ້, ຕ້ອງມີເອກະສານປະກອບ ຄື:

- ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ໂດຍຜ່ານກະຊວງການເງິນ.
- ໃບອະນຸຍາດນໍາເຂົ້າ ຂອງກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ.
- ໃບສະເໜີຂອງບໍລິສັດ ນໍ້າມັນເຊື້ອໄຟ.
- ໃບມອບສິດຂອງໂຄງການ ຫຼື ບໍລິສັດ.
- ສັນຍາ ລະຫວ່າງ ໂຄງການ/ບໍລິສັດ ແລະ ບໍລິສັດນໍ້າມັນເຊື້ອໄຟ.
- ຢັ້ງຢືນ ແລະ ສະຫຼຸບການມອບ-ຮັບນໍ້າມັນເຊື້ອໄຟຕາມສັນຍາ.
- ໃບທະບຽນວິສາຫະກິດ.
- ໃບຢັ້ງຢືນການມອບພັນທະປະຈໍາປີ.

5. ການຄຸ້ມຄອງການປະກອບເອກະສານຢູ່ກົມພາສີ (ພະແນກ ຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ).

ການດໍາເນີນການປະກອບເອກະສານຂໍນໍາເຂົ້ານໍ້າມັນເຊື້ອໄຟຍົກເວັ້ນປະເພດຕ່າງໆ ພາຍຫຼັງທີ່ມີການຕົກລົງອະນຸມັດແຜນນໍາເຂົ້າປະຈໍາປີ (Master List) ແລະ ມີການປະກອບເອກະສານອະນຸຍາດນໍາເຂົ້າຂອງຂະແໜງການກ່ຽວຂ້ອງ ແລະ ອື່ນໆ ດັ່ງທີ່ກ່າວມາໃນຂໍ້ 1-5 ຂ້າງເທິ່ງນີ້, ແມ່ນໃຫ້ດໍາເນີນການດັ່ງນີ້:

- ຜູ້ປະກອບການ ປະກອບເອກະສານການນໍາເຂົ້ານໍ້າມັນເຊື້ອໄຟປະເພດຕ່າງໆ.
- ກວດກາຂໍ້ມູນເອກະສານປະກອບ ການນໍາເຂົ້ານໍ້າມັນເຊື້ອໄຟຍົກເວັ້ນ ແລະ ລະບົບສາງເກັບມ້ຽນ.
- ປ້ອນຂໍ້ມູນ ແລະ ອອກໃບຢັ້ງຢືນການບັນທຶກຂໍ້ມູນລົງໃນລະບົບຄຸ້ມຄອງຫັກລົບແຜນ ແລະ ສໍາເນົາເກັບມ້ຽນ.
- ກວດກາຄວາມຖືກຕ້ອງ ແລະ ນໍາສະເໜີ ກົມພາສີ ອະນຸມັດດ້ານຈໍານວນ ແລະ ບໍລິມາດເປັນງວດ ໃສ່ໃບຕິດຕາມການຍົກເວັ້ນພາສີ-ອາກອນນໍາເຂົ້າ ຕາມໃບອະນຸຍາດຂອງຂະແໜງອຸດສາຫະກໍາ-ການຄ້າ ແລະ ໃຫ້ຖືກຕ້ອງຕາມແຜນນໍາເຂົ້າປະຈໍາປີ.
- ພະແນກ ຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ ອອກສະໂນດນໍາສົ່ງໃຫ້ດ່ານພາສີສາກົນບ່ອນນໍາເຂົ້າເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດຕາມການນໍາເຂົ້າຕົວຈິງ.
- ຄຸ້ມຄອງ, ຕິດຕາມ, ກວດກາປະເມີນຜົນການຈັດຕັ້ງປະຕິບັດການຫັກລົບແຜນນໍາເຂົ້າ ຕາມບໍລິມາດທີ່ໄດ້ອອກໃບຕິດຕາມການຍົກເວັ້ນພາສີ-ອາກອນນໍາເຂົ້າ ປະຈໍາອາທິດ, ເດືອນ, ງວດ ແລະ ປີ.

6. ດ່ານພາສີສາກົນບ່ອນສິນຄ້ານຳເຂົ້າ:
   - ກວດກາເອກະສານປະກອບ, ເອກະສານອະນຸຍາດນຳເຂົ້າຂະແໜງກ່ຽວຂ້ອງ ແລະ ຂໍ້ມູນການນຳເຂົ້ານ້ຳມັນເຊື້ອໄຟຍົກເວັ້ນ.
   - ກວດກາຄວາມຖືກຕ້ອງ ຕາມການອະນຸມັດດ້ານຈຳນວນ ແລະ ປໍລິມາດທີ່ນຳເຂົ້າຕົວຈິງໃສ່ ແຜນນຳເຂົ້າປະຈຳປີ.
   - ນຳໃຊ້ລະບົບຄຸ້ມຄອງຫັກລົບແຜນນຳເຂົ້າ.
   - ດຳເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດຕາມລະບຽບການ.
   - ອອກເອະສານກຳກັບການເຄື່ອນຍ້າຍ, ກຳນົດເສັ້ນທາງຂົນສົ່ງ ແລະ ສາງເກັບມ້ຽນ.
   - ຢັ້ງຢືນ ແລະ ສະຫຼຸບການມອບ-ຮັບນ້ຳມັນເຊື້ອໄຟ ລະຫວ່າງ ຜູ້ສະໜອງ ກັບ ເຈົ້າຂອງສິນຄ້າຕາມສັນຍາ.
   - ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດການຫັກລົບແຜນນຳເຂົ້າ ແລະ ສະຫຼຸບສັງລວມລາຍງານກົມພາສີ ປະຈຳອາທິດ, ເດືອນ, ງວດ ແລະ ປີ.
   - ປະສານສົມທົບກັບດ່ານຕົ້ນທາງ-ປາຍທາງ, ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈຳແຂວງ, ກ່ອນອະນຸຍາດໃຫ້ນ້ຳມັນເຊື້ອໄຟຍົກເວັ້ນອອກຈາກດ່ານ, ເພື່ອຄຸ້ມຄອງການເຄື່ອນຍ້າຍໃຫ້ຖືກຕ້ອງ ແລະ ນຳໃຊ້ສິດຕາມເປົ້າໝາຍໂຄງການ.
7. ມອບໃຫ້ບັນດາພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ ແລະ ບັນດາດ່ານຊາຍແດນໃນຂອບເຂດທົ່ວປະເທດປະສານສົມທົບ ແລະ ຈັດຕັ້ງປະຕິບັດ ແຈ້ງການແນະນຳສະບັບນີ້ໃຫ້ສຳເລັດຕາມຄາດໝາຍພ້ອມນັ້ນກໍ່ໃຫ້ໂຄສະນາເຜີຍແຜ່ໃຫ້ຜູ້ປະກອບການໄດ້ຮັບຊາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ.
8. ແຈ້ງການແນະນຳ ສະບັບນີ້ມີຜົນສັກສິດນັບແຕ່ວັນທີ 15 ຕຸລາ 2018 ເປັນຕົ້ນໄປ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ

ບຸນປະເສີດ ສີກຸນລະບຸດ

<u>ບ່ອນນຳສົ່ງ:</u>

| | | |
|---|---|---|
| - ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ | 1 ສະບັບ | " ຕາງລາຍງານ " |
| - ຮອງລັດຖະມົນຕີ ກະຊວງການເງິນ ທ່ານລະ | 1 ສະບັບ | " ຕາງລາຍງານ " |
| - ຫ້ອງການກະຊວງ | 1 ສະບັບ | " ເພື່ອຮັບຊາບ " |
| - ກົມນະໂຍບາຍ-ນິຕິກຳ | 1 ສະບັບ | " ເພື່ອຮັບຊາບ " |
| - ພາກສ່ວນກ່ຽວຂ້ອງ | 1 ສະບັບ | " ເພື່ອຮັບຊາບ " |
| - ສຳເນົາເກັບມ້ຽນ | | |